Moms in Prayer INTERNATIONAL
ກຸ່ມອະທິຖານສາກົນຂອງບັນດາແມ່

# ພຣະເຈົ້າຊົງເມດຕາກະລຸນາ

**ສັນລະເສີນ**—*ຍ້ອງຍໍສັນລະເສີນໃນຄວາມເປັນພຣະເຈົ້າ, ໃນຄຸນລັກສະນະ, ໃນພຣະນາມ ຫຼື ໃນພຣະລັກສະນະຂອງພຣະອົງ. ບໍ່ມີການຂໍໃນການອະທິຖານເທື່ອ.*

**ພຣະລັກສະນະ: ພຣະເຈົ້າຊົງເມດຕາກະລຸນາ** **Attribute: God Is Compassionate**

**ຄວາມໝາຍ**: ພຣະອົງຊົງຫ່ວງໃຍ, ເຕັມໄປດ້ວຍຄວາມຮັກ ແລະ ເຫັນອົກເຫັນໃຈ.

**ຂໍ້ພະຄຳພີ**:

- **ເພງສັນລະເສີນ 116:5** ອົງພຣະຜູ້ເປັນເຈົ້າຊົງຄຸນຄວາມດີແລະທ່ຽງທຳ; ພຣະເຈົ້າຂອງພວກເຮົາຊົງເມດຕາກະລຸນາຢ່າງເຕັມລົ້ນ.
- **ເພງສັນລະເສີນ 145:8-9** ອົງພຣະຜູ້ເປັນເຈົ້າຊົງຄຸນຄວາມດີ ແລະ ມີເມດຕາ, ຊ້າໃນການໂກດຮ້າຍ ແລະ ເຕັມລົ້ນໃນຄວາມຮັກສະເໝີ. ພຣະອົງກະທຳດີຕໍ່ທຸກໆຄົນ; ແລະເມດຕາສົງສານທຸກສິ່ງທີ່ພຣະອົງໄດ້ສ້າງ.
- **ເພງຄ່ຳຄວນ 3:22-23** ຄວາມຮັກຂອງອົງພຣະຜູ້ເປັນເຈົ້າບໍ່ມີວັນສິ້ນສຸດ; ພຣະເມດຕາຂອງພຣະອົງຕໍ່ເຮົາບໍ່ມີມື້ໝົດໄປ; ເຊິ່ງສົດໃໝ່ທຸກໆເຊົ້າ; ພຣະອົງເຈົ້າສັດຊື່ບໍ່ປ່ຽນແປງ.
- **ໂຢເອນ 2:13** "ຈົ່ງສົ່ງໃຫ້ເຫັນໃຈທີ່ແຕກສະຫຼາຍຂອງເຈົ້າ ບໍ່ແມ່ນພຽງແຕ່ຈີກເຄື່ອງນຸ່ງດ້ວຍຄວາມໂສກເສົ້າ" ດຽວນີ້ເຈົ້າຈົ່ງກັບມາຫາພຣະອົງຜູ້ເປັນພຣະເຈົ້າຂອງເຈົ້າສາ, ເພາະພຣະອົງຊົງຊົງຄຸນຄວາມດີແລະເມດຕາເຕັມລົ້ນ; ຊ້າໃນການໃຈຮ້າຍ, ເຕັມໄປດ້ວຍຄວາມແສນດີ ແລະ ພຣະອົງບໍ່ຖືໂທດຄວາມຜິດທີ່ເຮົາເຮັດໄປ.
- **ເອຊາຢາ 30:18** ເຖິງປານນັ້ນພຣະເຈົ້າກໍຍັງລໍຄອຍທີ່ຈະເມດຕາພວກເຈົ້າຢູ່; ພຣະອົງຈຶ່ງຈະລຸກຂຶ້ນເພື່ອສຳແດງຄວາມເຫັນອົກເຫັນໃຈແກ່ພວກເຈົ້າ. ເພາະພຣະເຈົ້າເປັນພຣະເຈົ້າຜູ້ຍຸດຕິທຳ. ຄວາມສຸກໃຈເປັນຂອງຜູ້ທີ່ລໍຄອຍອົງພຣະຜູ້ເປັນເຈົ້າ.

**ການສາລະພາບບາບ**—ໃຫ້ສາລະພາບບາບຂອງເຈົ້າຢ່າງງຽບໆຕໍ່ພະເຈົ້າຜູ້ຊົງໃຫ້ອະໄພ.
ຖ້າເຮົາສາລະພາບຄວາມບາບຂອງພວກເຮົາ,ພຣະອົງຊົງສັດຊື່ແລະທ່ຽງທຳທີ່ຈະໃຫ້ອະໄພການບາບເຫຼົ່ານັ້ນ,ທັງຍັງສຳລະເຮົາໃຫ້ຂາວສະອາດຈາກການອະທຳທັງປວງ. 1 ໂຢຮັນ 1:9

**ການຂອບພະຄຸນ**—ໃຫ້ຂອບໃຈພະເຈົ້າສຳລັບສິ່ງທີ່ພະອົງໄດ້ຊົງກະທຳ. ບໍ່ມີການຮ້ອງຂໍໃນການອະທິຖານເທື່ອ.
ໃນທຸກໆສິ່ງຢ່າງ ຈົ່ງຂອບພະຄຸນ; ເພາະນີ້ຄືເຊິ່ງທີ່ພະເຈົ້າຕ້ອງການຈາກເຮົາທີ່ຢູ່ໃນພຣະເຢຊູຄຣິດເຈົ້າ. 1 ເທສະໂລນິກ 5:18

**ການເຂົ້າຫາພະເຈົ້າແທນຜູ້ອື່ນ**—ນີ້ເປັນການອະທິຖານຫາພະເຈົ້າແທນຜູ້ອື່ນຫຼືເພື່ອຄົນອື່ນ. ໃຫ້ຕັ້ງກຸ່ມອະທິຖານ 2-3 ຄົນ.

**ລູກຂອງພວກເຮົາ**—ແມ່ແຕ່ລະຄົນເລືອກລູກຄົນໜຶ່ງທີ່ຈະອະທິຖານເພື່ອ. ທຳອິດໃຫ້ອະທິຖານຕາມພະຄຳພີ ແລ້ວອະທິຖານຂໍສິ່ງທີ່ຕ້ອງການເພື່ອລູກຄົນນັ້ນ.

**ຂໍ້ພະຄຳພີ**: ໂກໂລຊາຍ 3:12

**ຄຳອະທິຖານຕາມພະຄຳພີ**: ຂໍໃຫ້ (ຊື່ຂອງລູກ), ຜູ້ທີ່ພຣະເຈົ້າໄດ້ຊົງຮັກແລະຊົງເລືອກໄວ້, ຈົ່ງປະພຶດຕົນໃຫ້ມີໃຈເມດຕາ, ໃຈດີ, ໃຈຖ່ອມຕົວລົງ, ໃຈສຸພາບອ່ອນໂຍນ ແລະ ມີຄວາມອົດທົນດົນນານ.

**ຄຳຮ້ອງຂໍສະເພາະເຈາະຈົງ**:

**ຄູ ຫຼື ພະນັກງານ**—ໃຊ້ຂໍ້ພະຄຳພີຂ້າງລຸ່ມນີ້ ຫຼື ຂໍ້ພະຄຳສຳລັບລູກໆ ເພື່ອອະທິຖານເພື່ອຄູ/ພະນັກງານຄົນໃດໜຶ່ງ. ແລ້ວອະທິຖານຂໍສິ່ງສະເພາະເຈາະຈົງເພື່ອຄົນໆນັ້ນ.

- ຂໍພະເຈົ້າເປີດຕາ __________ ແລະ ປ່ຽນລາວໃຫ້ຫັນຈາກຄວາມມືດສູ່ແສງສະຫວ່າງ, ຈາກການຢູ່ໃຕ້ອຳນາດຂອງມານຊາຕານ ສູ່ການເພິ່ງພາລິດເດດຂອງພຣະຜູ້ເປັນເຈົ້າ, ເພື່ອລາວຈະໄດ້ຮັບການອະໄພບາບ ແລະ ກາຍເປັນໜຶ່ງໃນຜູ້ທີ່ຖືກຊ່ວຍໃຫ້ພົ້ນໂດຍຄວາມເຊື່ອໃນພຣະເຍຊູ. *ກິດຈະການ 26:18*

## ບັນຫາເລື່ອງໂຮງຮຽນ:

1. ອະທິຖານໃຫ້ມີການຟື້ນຟູຝ່າຍວິນຍານໃນໂຮງຮຽນ.
2. ອະທິຖານຂໍການປົກປ້ອງໃຫ້ແກ່ຄູອາຈານ ແລະ ນັກຮຽນທັງຫຼາຍ.
3. ອະທິຖານເພື່ອບັນຫາຕ່າງໆໃນໂຮງຮຽນ.

## ບັນດາແມ່ໆອະທິຖານເພື່ອ:

1. ອະທິຖານເພື່ອໂຮງຮຽນຕ່າງໆທົ່ວໂລກ, ແລະ ກຸ່ມຕ່າງໆໃຫ້ຕັ້ງໝັ້ນຄົງ.
2. ຂໍການປົກປ້ອງເພື່ອພັກລັດ ການຮັບໃຊ້ຕ່າງໆ ໃຫ້ມີຄວາມສັດຊື່ບໍລິສຸດ ແລະ ບໍ່ແຕກແຍກກັນ.

*ຈື່ໄວ້ວ່າ, ສິ່ງທີ່ອະທິຖານຢູ່ໃນກຸ່ມ ຄວນຈະຖືກເກັບໄວ້ໃນກຸ່ມເທົ່ານັ້ນ!*